ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0546 /ກປ

ນະຄອນຫຼວງວຽງຈັນ, ວັນທີ 12 MAY 2021

# ຂໍ້ຕົກລົງ

## ວ່າດ້ວຍອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້

- ອີງຕາມ ກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017;

## ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ເພື່ອເປັນບ່ອນອີງໃຫ້ແກ່ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ແຕ່ລະຂັ້ນ ໃນການເຄື່ອນໄຫວ, ດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍ ແລະ ນິຕິກຳ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ.

**ມາດຕາ 2 ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້**

ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ແມ່ນການຈັດຕັ້ງດຽວກັນກັບ ກົມກວດກາປ່າໄມ້, ກອງກວດກາປ່າໄມ້ຂັ້ນແຂວງ ແລະ ໜ່ວຍງານກວດກາປ່າໄມ້ຂັ້ນເມືອງ ເຮັດໜ້າທີ່ ກວດກາ, ເກັບກຳຂໍ້ມູນ, ຫຼັກຖານ, ສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ ສົ່ງໃຫ້ ອົງການໄອຍະການປະຊາຊົນ ພິຈາລະນາ ສັ່ງຟ້ອງຂຶ້ນສານ.

**ມາດຕາ 3 ຫຼັກການຄຸ້ມຄອງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້**

ການຄຸ້ມຄອງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ຕາມກົດໝາຍ;

2. ກົມກວດກາປ່າໄມ້ ເປັນຜູ້ຮັບຜິດຊອບຊີ້ນໍາວຽກງານວິຊາສະເພາະ ໃຫ້ແກ່ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ໃນຂອບເຂດທົ່ວປະເທດ;

3. ການຄຸ້ມຄອງວຽກພັກ, ວຽກງານນະໂຍບາຍອື່ນໆ ຂອງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຢູ່ທ້ອງຖິ່ນ ແມ່ນຂຶ້ນກັບອົງການປົກຄອງທ້ອງຖິ່ນ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ລວມທັງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບການກວດກາ, ສືບສວນ-ສອບສວນ ແລະ ດໍາເນີນຄະດີ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ ຢູ່ ສປປ ລາວ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ ຂອງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້

**ມາດຕາ 5 ໜ້າທີ່ ແລະ ຂອບເຂດສິດ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຂັ້ນສູນກາງ**

**5.1. ໜ້າທີ່**

1. ເຜີຍແຜ່ ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ນິຕິກໍາອື່ນໆ ທີ່ກ່ຽວຂ້ອງກັບ ວຽກງານ ປ່າໄມ້, ທີ່ດິນປ່າໄມ້, ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ ໃຫ້ພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນ ຮັບຮູ້ເຂົ້າໃຈ;

2. ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ ໃນຂອບເຂດທົ່ວປະເທດ;

3. ກວດກາ ກິດຈະການ, ໂຄງການ, ການດໍາເນີນທຸລະກິດ ກ່ຽວກັບ ປ່າໄມ້ ແລະ ທີ່ດິນປ່າໄມ້, ກວດກາ ການນໍາເຂົ້າ, ການສົ່ງອອກ, ນໍາຜ່ານ ກ່ຽວກັບ ໄມ້, ເຄື່ອງປ່າຂອງດົງ, ສັດນໍ້າ-ສັດປ່າ, ຜະລິດຕະພັນຈາກສັດປ່າ ໃນຂອບເຂດທົ່ວປະເທດ;

4. ຊຸກຍູ້, ຕິດຕາມ, ກວດກາ ແລະ ເຂົ້າຮ່ວມການດໍາເນີນຄະດີ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ, ພ້ອມທັງສືບສວນ-ສອບສວນ ເສັ້ນທາງການເງິນຂອງຜູ້ກະທໍາຜິດຢ່າງຮັດກຸມ;

5. ຮັບ, ບັນທຶກ ການແຈ້ງຄວາມ, ການລາຍງານ ຫຼື ການຮ້ອງຟ້ອງ ກ່ຽວກັບ ການກະທໍາຜິດທາງອາຍາ;

6. ອອກຄໍາສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ, ຄໍາສັ່ງໂຈະ ຫຼື ຊັດມ້ຽນຄະດີ, ຄໍາສັ່ງກັກຕົວ ຫຼື ຄໍາສັ່ງປ່ອຍຕົວ;

7. ສະເໜີ ແລະ ລາຍງານຕໍ່ອົງການໄອຍະການປະຊາຊົນ ເພື່ອອອກຄໍາສັ່ງຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ຕໍ່ເວລາການສືບສວນ-ສອບສວນ ແລະ ຕໍ່ເວລາການກັກຂັງພາງ;

8. ສະຫຼຸບການສືບສວນ-ສອບສວນ ແລະ ປະກອບສໍານວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ ເພື່ອພິຈາລະນາສັ່ງຟ້ອງຂຶ້ນສານ;

9. ຊີ້ນໍາ, ຊຸກຍູ້, ຕິດຕາມອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຂັ້ນແຂວງ ແລະ ຂັ້ນເມືອງ ໃນການກວດກາ ແລະ ດໍາເນີນຄະດີ ຕາມຂັ້ນຕອນຂອງກົດໝາຍ;





10. ສ້າງຄວາມເຂັ້ມແຂງ ທາງດ້ານວິຊາສະເພາະ ໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ໃນຂອບເຂດທົ່ວປະເທດ;

11. ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ.

**5.2. ຂອບເຂດສິດ**

1. ຢຶດ, ອາຍັດ, ປັບໃໝ ຫຼື ສັ່ງໂຈະ ການດໍາເນີນກິດຈະການຊົ່ວຄາວ, ຖ້າພົບເຫັນຮ່ອງຮອຍຂອງການກະທໍາຜິດເຊິ່ງໜ້າ ຫຼື ຮີບດ່ວນ, ມີສິດກວດຄົ້ນຫາຂອງກາງ ໂດຍບໍ່ຈໍາເປັນ ຂໍຄໍາສັ່ງຈາກອົງການກ່ຽວຂ້ອງ, ຫຼັງຈາກນັ້ນຕ້ອງລາຍງານ ໃຫ້ ອົງການໄອຍະການປະຊາຊົນ, ກະຊວງກະສິກໍາ ແລະ ປ່າໄມ້ ຮັບຊາບພາຍໃນກໍານົດຊາວສີ່ຊົ່ວໂມງ ຕາມກົດໝາຍ;

2. ປະສານສົມທົບກັບອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ອື່ນ ຂັ້ນສູນກາງ ແລະ ທ້ອງຖິ່ນທີ່ມີສ່ວນກ່ຽວຂ້ອງ ໃນການດໍາເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້;

3. ປະຕິບັດສິດອື່ນໆ ຕາມກົດໝາຍ.

**ມາດຕາ 6 ໜ້າທີ່ ແລະ ຂອບເຂດສິດ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຂັ້ນແຂວງ**

**6.1. ໜ້າທີ່**

1. ເຜີຍແຜ່ ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ນິຕິກໍາອື່ນໆ ທີ່ກ່ຽວຂ້ອງກັບວຽກງານ ປ່າໄມ້, ທີ່ດິນປ່າໄມ້, ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ ໃຫ້ພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນ ຮັບຮູ້ເຂົ້າໃຈ;

2. ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ ໃນຂອບເຂດແຂວງຂອງຕົນ;

3. ກວດກາ ກິດຈະການ, ໂຄງການ, ການດໍາເນີນທຸລະກິດ ກ່ຽວກັບ ປ່າໄມ້ ແລະ ທີ່ດິນປ່າໄມ້, ກວດກາ ການນໍາເຂົ້າ, ການສົ່ງອອກ, ນໍາຜ່ານ ກ່ຽວກັບ ໄມ້, ເຄື່ອງປ່າຂອງດົງ, ສັດນໍ້າ-ສັດປ່າ, ຜະລິດຕະພັນຈາກສັດປ່າ ໃນຂອບເຂດແຂວງຂອງຕົນ;

4. ຮັບ, ບັນທຶກ ການແຈ້ງຄວາມ, ການລາຍງານ ຫຼື ການຮ້ອງຟ້ອງ ກ່ຽວກັບ ການກະທໍາຜິດທາງ ອາຍາ;

5. ຮັບຜິດຊອບດໍາເນີນຄະດີ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ ພ້ອມກັນນັ້ນກໍ່ໃຫ້ສືບສວນ-ສອບສວນເຖິງເສັ້ນທາງການເງິນຂອງຜູ້ກະທໍາຜິດຢ່າງຮັດກຸມ ແລະ ທຸກໆຄະດີ ຕ້ອງໄດ້ລາຍງານໃຫ້ກົມກວດກາປ່າໄມ້ ເພື່ອຕິດຕາມ;

6. ສໍາເນົາສໍານວນຄະດີ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອເກັບຮັກສາໃຫ້ເປັນລະບົບ ແລະ ສາມາດກວດສອບໄດ້;

7. ສະເໜີ ແລະ ລາຍງານຕໍ່ອົງການໄອຍະການປະຊາຊົນ ເພື່ອອອກຄໍາສັ່ງຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ຕໍ່ເວລາການສືບສວນ-ສອບສວນ ແລະ ຕໍ່ເວລາການກັກຂັງພາງ;

8. ສະຫຼຸບການສືບສວນ-ສອບສວນ ແລະ ປະກອບສໍານວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ ເພື່ອພິຈາລະນາສັ່ງຟ້ອງຂຶ້ນສານ;

9. ສະຫຼຸບ ແລະ ລາຍງານວຽກງານຂອງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຂັ້ນແຂວງ ໃຫ້ພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ, ນະຄອນຫຼວງ ແລະ ກົມກວດກາປ່າໄມ້ ປະຈໍາເດືອນ, ງວດ ແລະ ປີ ຢ່າງເປັນປົກກະຕິ;

10. ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ.

**6.2. ຂອບເຂດສິດ**

1. ຍຶດ, ອາຍັດ, ປັບໃໝ ຫຼື ສັ່ງໂຈະ ການດຳເນີນກິດຈະການຊົ່ວຄາວ, ຖ້າພົບເຫັນຮ່ອງຮອຍຂອງການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ, ມີສິດກວດຄົ້ນຫາຂອງກາງ ໂດຍບໍ່ຈຳເປັນ ຂໍຄຳສັ່ງຈາກອົງການກ່ຽວ ຂ້ອງ, ຫຼັງຈາກນັ້ນຕ້ອງລາຍງານ ໃຫ້ ອົງການໄອຍະການປະຊາຊົນ, ກົມກວດກາປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ຮັບຊາບພາຍໃນກຳນົດຊາວສີ່ຊົ່ວໂມງ ຕາມກົດໝາຍ;

2. ປະສານສົມທົບກັບອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ອື່ນ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ມີສ່ວນກ່ຽວຂ້ອງ ໃນການດຳເນີນຄະດີ ກ່ຽວກັບ ຊັບພະຍາກອນປ່າໄມ້;

3. ປະຕິບັດສິດອື່ນ ຕາມກົດໝາຍ.

## ມາດຕາ 7 ໜ້າທີ່ ແລະ ຂອບເຂດສິດ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຂັ້ນເມືອງ

**7.1. ໜ້າທີ່**

1. ເຜີຍແຜ່ ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ນິຕິກຳອື່ນໆ ທີ່ກ່ຽວຂ້ອງກັບວຽກ ປ່າໄມ້, ທີ່ດິນປ່າໄມ້, ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ ໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ຮັບຮູ້ເຂົ້າໃຈ;

2. ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ ໃນຂອບເຂດເມືອງຂອງຕົນ;

3. ກວດກາ ກິດຈະການ, ໂຄງການ, ການດຳເນີນທຸລະກິດ ກ່ຽວກັບ ປ່າໄມ້ ແລະ ທີ່ດິນປ່າໄມ້, ກວດກາ ການນຳເຂົ້າ, ການສົ່ງອອກ, ນຳຜ່ານ ກ່ຽວກັບ ໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ-ສັດປ່າ, ຜະລິດຕະພັນຈາກສັດປ່າ ໃນຂອບເຂດເມືອງຂອງຕົນ;

4. ຂຶ້ນບັນຊີເປົ້າໝາຍຜູ້ລະເມີດ ແລະ ຕິດຕາມເປົ້າໝາຍ ຢູ່ພາຍໃນຂອບເຂດເມືອງຂອງຕົນ;

5. ຮັບບັນທຶກແຈ້ງຄວາມ, ເກັບກຳສະພາບການທຳລາຍປ່າໄມ້ ແລະ ລ່າສັດປ່າ, ສຳເນົາຂໍ້ມູນການສືບສວນ-ສອບສວນເບື້ອງຕົ້ນໄວ້ເປັນລະບົບ;

6. ອອກແຈ້ງເຊີນຜູ້ລະເມີດ ມາໃຫ້ການເບື້ອງຕົ້ນ, ສົ່ງຂໍ້ມູນໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຂັ້ນແຂວງ ໃນກໍລະນີຜູ້ລະເມີດບໍ່ໃຫ້ການຮ່ວມມືຕາມກົດໝາຍ;

7. ສຶກສາອົບຮົມຜູ້ລະເມີດ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ ພ້ອມທັງສ້າງບົດບັນທຶກ ກ່າວເຕືອນ, ຍຶດ ແລະ ອາຍັດຂອງກາງ;

8. ສະຫຼຸບ ແລະ ລາຍງານວຽກງານສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ເມືອງຂອງຕົນ ໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຊາບ ເປັນປົກກະຕິ;

9. ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ.

**7.2. ຂອບເຂດສິດ**

1. ກວດກາ ການບຸກລຸກທີ່ດິນປ່າໄມ້, ການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້, ເຄື່ອງປ່າຂອງດົງ, ສະໜາມ I, II, III, ສາງມ້ຽນໄມ້, ໂຮງງານປຸງແຕ່ງໄມ້ສຳເລັດຮູບ, ໂຮງເຟີນີເຈີ, ຮ້ານຂາຍໄມ້, ໂຮງງານ ທີ່ ນຳໃຊ້ໄມ້ເປັນພະລັງງານ, ການຄ້າຂາຍສັດນ້ຳ-ສັດປ່າ, ຟາມ ຫຼື ສວນສັດນ້ຳ - ສັດປ່າ ແລະ ສະຖານທີ່ອື່ນໃນຂອບເຂດເມືອງຂອງຕົນ;

2. ແຈ້ງເຊີນຜູ້ຖືກສົງໄສມາໃຫ້ຂໍ້ມູນເບື້ອງຕົ້ນ ຄົ້ນຄວ້າແກ້ໄຂໃນກໍລະນີ ມີການລະເມີດ ທີ່ມີມູນຄ່າເສຍຫາຍຕ່ຳກວ່າ ຫ້າລ້ານກີບຕໍ່ຄັ້ງ;

3. ນຳໃຊ້ສິດອື່ນ ຕາມກົດໝາຍ.

**ມາດຕາ 8 ສິດ ແລະ ໜ້າທີ່ຂອງຫົວໜ້າ ແລະ ຮອງຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຂອງແຕ່ລະຂັ້ນ:**

1. ຈັດຕັ້ງ ແລະ ຊີ້ນຳໂດຍກົງວຽກງານສືບສວນ-ສອບສວນ ຂອງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້;

2. ມອບໝາຍ ຫຼື ປ່ຽນແທນ ເຈົ້າໜ້າທີ່ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້;

3. ພິຈາລະນາ ປ່ຽນແປງ ຫຼື ລົບລ້າງ ຄຳສັ່ງຂອງເຈົ້າໜ້າທີ່ອົງການສືບສວນ-ສອບສວນຂອງເຈົ້າໜ້າ ທີ່ປ່າໄມ້ ທີ່ບໍ່ມີພື້ນຖານ ແລະ ບໍ່ຖືກຕ້ອງຕາມກົດໝາຍ;

4. ອອກຄຳສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ, ໝາຍຮຽກ, ໝາຍເຊີນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງຍຶດ ຫຼື ອາຍັດຊັບ, ຄຳສັ່ງປ່ອຍຕົວຜູ້ຖືກສົງໄສ ທີ່ຖືກກັກຕົວ, ຄຳສັ່ງໂຈະ ຫຼື ຊັດມ້ຽນຄະດີ;

5. ແຈ້ງຂໍ້ກ່າວຫາ, ສິດ ແລະ ພັນທະ ໃຫ້ຜູ້ຖືກສົງໄສ, ຜູ້ຖືກຫາ;

6. ອອກຄຳສັ່ງແຕ່ງຕັ້ງ ຜູ້ແປພາສາ, ຊ່ຽວຊານ ຫຼື ຜູ້ຊຳນານງານ;

7. ຮັບເອົາການແຕ່ງຕັ້ງ ຫຼື ສະເໜີແຕ່ງຕັ້ງທະນາຍຄວາມ;

8. ສະເໜີຂໍຄຳສັ່ງ ຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ກວດຄົ້ນເຄຫະສະຖານ, ງົດໜ້າທີ່ ຫຼື ຕຳແໜ່ງ, ຕໍ່ກຳນົດເວລາການສືບສວນ-ສອບສວນ ແລະ ຕໍ່ການກຳນົດເວລາການກັກຂັງພາງ ຈາກຫົວໜ້າອົງການໄອຍະການ;

9. ສະຫຼຸບ ແລະ ປະກອບສຳນວນຄະດີ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ ສົ່ງໃຫ້ອົງການໄອຍະການ ເພື່ອພິຈາລະນາ ພາຍຫຼັງການສືບສວນ-ສອບສວນ ໄດ້ສຳເລັດ ແລ້ວ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ.

ຮອງຫົວໜ້າອົງການສືບສວນ-ສອບສວນ ມີໜ້າທີ່ຊ່ວຍຫົວໜ້າ ໃນການດຳເນີນຄະດີ ກ່ຽວກັບປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ຕາມການມອບໝາຍ.

**ມາດຕາ 9 ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ແຕ່ລະຂັ້ນ**

1. ຮັບ ແລະ ບັນທຶກການແຈ້ງຄວາມ, ການລາຍງານ ຫຼື ການຮ້ອງຟ້ອງ ກ່ຽວກັບການກະທຳຜິດທາງອາຍາ ທີ່ພົວພັນເຖິງການກະທຳຜິດຕໍ່ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ;

2. ສະເໜີອອກ ໝາຍຮຽກ, ໝາຍເຊີນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງຍຶດ ຫຼື ອາຍັດຊັບ, ຄຳສັ່ງປ່ອຍຕົວຜູ້ຖືກສົງໄສ ທີ່ຖືກກັກຕົວ, ຄຳສັ່ງໂຈະ ຫຼື ຊັດມ້ຽນຄະດີ;

3. ເອົາຄຳໃຫ້ການຂອງຜູ້ຖືກສົງໄສ, ຜູ້ຖືກຫາ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ພະຍານ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ;

4. ຊັນນະສູດສະຖານທີ່ເກີດເຫດ, ຊາກສັດປ່າ, ກວດຄົ້ນເຄຫາສະຖານ, ຍານພາຫະນະ, ກວດຄົ້ນຕົວບຸກຄົນ ພ້ອມທັງເກັບກຳ ລວບລວມຫຼັກຖານຕ່າງໆ ກ່ຽວກັບ ການກະທຳຜິດ ປ່າໄມ້, ທີ່ດິນປ່າໄມ້, ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ, ຜະລິດຕະພັນເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ, ຊິ້ນສ່ວນ ແລະ ຜະລິດຕະພັນຈາກສັດປ່າ;

5. ພາຕົວ, ກັກຕົວ, ປ່ອຍຕົວ ຜູ້ຖືກຫາ ຕາມຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້;

6. ຊອກຫາ, ຈັບຕົວ, ພາຕົວ, ປ່ອຍຕົວພາງ ຜູ້ຖືກຫາ ຕາມຄຳສັ່ງຂອງຫົວໜ້າອົງການໄອຍະການ ຫຼື ສານ;

7. ແຈ້ງ ຂໍ້ກ່າວຫາ, ສິດ ແລະ ພັນທະ ໃຫ້ຜູ້ຖືກສົງໄສ, ຜູ້ຖືກຫາ ທີ່ພົວພັນເຖິງການລະເມີດ ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນໍ້າ ແລະ ສັດປ່າ;

8. ປະຕິບັດຕາມຄໍາສັ່ງ ແລະ ລາຍງານສະພາບການ ກ່ຽວກັບ ການດໍາເນີນຄະດີ ຜູ້ລະເມີດກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນໍ້າ ແລະ ສັດປ່າ ຕໍ່ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້;

9. ເຮັດບົດສະຫຼຸບ ລາຍງານ ແລະ ປະກອບສໍານວນຄະດີຊັບພະຍາກອນປ່າໄມ້ ສະເໜີຕໍ່ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມຄໍາສັ່ງຂອງຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ແລະ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງຂອງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້

### ມາດຕາ 10 ໂຄງປະກອບກົງຈັກ

ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ປະກອບມີ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມກວດກາປ່າໄມ້;
2. ຂັ້ນແຂວງ ແມ່ນ ກອງກວດກາປ່າໄມ້ຂັ້ນແຂວງ;
3. ຂັ້ນເມືອງ ແມ່ນ ໜ່ວຍງານກວດກາປ່າໄມ້ຂັ້ນເມືອງ.

### ມາດຕາ 11 ບຸກຄະລາກອນ

ບຸກຄະລາກອນ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ແຕ່ລະຂັ້ນ ມີ ດັ່ງນີ້:

1. ຂັ້ນສູນກາງ ປະກອບມີ ຫົວໜ້າ ແລະ ຮອງຫົວໜ້າ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຊຶ່ງແມ່ນ ຫົວໜ້າ ແລະ ຮອງຫົວໜ້າ ກົມກວດກາປ່າໄມ້ ໂດຍຕໍາແໜ່ງ.

ນອກຈາກນັ້ນ, ຍັງມີຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນປ່າໄມ້ຈໍານວນໜຶ່ງ ຊຶ່ງໄດ້ຮັບ ການແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ ຈາກລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ຕາມການສະເໜີ ຂອງກົມກວດກາປ່າໄມ້ ແລະ ການຄົ້ນຄວ້າຈາກ ກົມຈັດຕັ້ງ ແລະ ພະນັກງານ;

2. ຂັ້ນແຂວງ ປະກອບມີ ຫົວໜ້າ, ຮອງຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້, ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນຈໍານວນໜຶ່ງ ໂດຍໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຈາກລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ຕາມການສະເໜີຂອງ ຄະນະຈັດຕັ້ງຂັ້ນແຂວງ ບົນພື້ນຖານການເຫັນດີຂອງພະແນກກະສິກໍາ ແລະ ປ່າໄມ້ ແຂວງ;

3. ຂັ້ນເມືອງ ປະກອບມີ ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານ ແລະ ເຈົ້າໜ້າທີ່ປ່າໄມ້ຈໍານວນໜຶ່ງ ໂດຍໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຈາກລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ຕາມການສະເໜີຂອງ ຄະນະຈັດຕັ້ງຂັ້ນເມືອງ, ຂັ້ນແຂວງ ບົນພື້ນຖານການເຫັນດີຂອງພະແນກກະສິກໍາ ແລະ ປ່າໄມ້ແຂວງ.

## ໝວດທີ 4
## ມາດຕະຖານ ແລະ ຂໍ້ຫ້າມສໍາລັບເຈົ້າໜ້າທີ່ສືບສວນ-ສອບສວນ

### ມາດຕາ 12 ມາດຕະຖານ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ

ເຈົ້າໜ້າທີ່ສືບສວນ-ສອບສວນ ຕ້ອງມີມາດຕະຖານຄົບຖ້ວນ ດັ່ງນີ້:

1. ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດ ສິນທຳປະຕິວັດ, ມີຊີວະປະຫວັດ ແລະ ການເຄື່ອນໄຫວຈະແຈ້ງ, ມີຄວາມຈົ່ງຮັກພັກດີ, ມີຄວາມເປັນເອກະພາບກັບແນວທາງ, ນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ;

2. ມີລະບຽບວິໄນ ແລະ ສະຕິຕໍ່ການຈັດຕັ້ງ ແລະ ເປັນແບບຢ່າງໃນການປະຕິບັດກົດໝາຍ, ເດັດດ່ຽວສະກັດກັ້ນ ແລະ ຕ້ານທຸກການກະທຳທີ່ເປັນການລະເມີດກົດໝາຍຂອງລັດ ແລະ ລະບຽບການ ກ່ຽວກັບຊັບພະຍາກອນປ່າໄມ້;

3. ດ້ານວິຊາສະເພາະປ່າໄມ້ ຫຼື ກົດໝາຍທີ່ກ່ຽວຂ້ອງກັບການດຳເນີນຄະດີລະດັບປະລິນຍາຕຼີຂຶ້ນໄປ, ມີຄວາມຮູ້, ຄວາມສາມາດນຳໃຊ້ຄອມພິວເຕີໄດ້ໃນລະດັບດີພໍສົມຄວນ;

4. ຜ່ານການທົດລອບໃນວຽກງານກວດກາປ່າໄມ້ 2 ປີຂຶ້ນໄປ ແລະ ໄດ້ຝຶກອົບຮົມວຽກງານສືບສວນ-ສອບສວນ ໄລຍະສັ້ນ ຫຼື ໄລຍະຍາວ ໂດຍໄດ້ຮັບໃບຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ;

5. ມີຄວາມເປັນທຳ, ມີຄວາມສັດຊື່ບໍລິສຸດ, ໂປ່ງໃສ, ບໍ່ສວຍໂອກາດຫາຜົນປະໂຫຍດສ່ວນຕົວ ບໍ່ສ້າງຄວາມເສື່ອມເສຍໃຫ້ການຈັດຕັ້ງທີ່ຕົນສັງກັດຢູ່, ບໍ່ລຳອຽງ, ບໍ່ອະຄະຕິ, ໄຈ້ແຍກຂໍ້ມູນ ຢ່າງຖືກຕ້ອງ ຊັດເຈນ ແລະ ຕັດສິນບັນຫາ ດ້ວຍຄວາມຮັບຜິດຊອບສູງ;

6. ມີສຸຂະພາບແຂງແຮງ.

**ມາດຕາ 13 ຂໍ້ຫ້າມສຳລັບເຈົ້າໜ້າທີ່ສືບສວນ-ສອບສວນ**

1. ຫ້າມສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ໃຊ້ສິດໜ້າທີ່ເກີນຂອບເຂດທີ່ສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ຜົນປະໂຫຍດຂອງປະຊາຊົນ;

2. ຫ້າມບັງຄັບ ແລະ ນາບຂູ່ຜູ້ຖືກກວດກາ, ຜູ້ຖືກຫາ ຫຼື ຜູ້ຖືກສົງໄສໃນຄະດີ;

3. ຫ້າມປະລະໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ວຽກງານກວດກາປ່າໄມ້, ສັດນ້ຳ ແລະ ສັດປ່າ ທີ່ການຈັດຕັ້ງມອບໝາຍໃຫ້;

4. ຫ້າມສົມຮູ້ຮ່ວມຄິດ, ບິດເບືອນຄວາມຈິງ, ປົດບັງ ຫຼື ປົກປ້ອງຜູ້ຖືກຫາ ຫຼື ຄູ່ຄວາມໃນຄະດີ, ກັກສຳນວນຄະດີ, ກົດໜ່ວງເອກະສານ, ພົວພັນກັບຜູ້ຖືກກວດກາ ຫຼື ຜູ້ຖືກຫາ ເພື່ອຫາຜົນປະໂຫຍດສ່ວນຕົວຕໍ່ລອງ, ຮັບສິນບົນຈາກຄູ່ຄວາມເປັນບຸກຄົນ ຫຼື ການຈັດຕັ້ງ;

5. ຫ້າມກວດກາ ແລະ ດຳເນີນການສືບສວນ-ສອບສວນ ໂດຍບໍ່ໄດ້ຮັບອະນຸຍາດຈາກຫົວໜ້າອົງການສືບສວນ-ສອບສວນ ໃນຂັ້ນຂອງຕົນ;

6. ຫ້າມເປີດເຜີຍຄວາມລັບຂອງລັດຖະການ ແລະ ປອມແປງເອກະສານ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ;

7. ຫ້າມດຳເນີນ ຫຼື ເຂົ້າຮ່ວມລົງທຶນທຸລະກິດໄມ້ ຫຼື ເປັນທີ່ປຶກສາດ້ານການຄ້າ-ຂາຍໄມ້ ຫຼື ມີສ່ວນພົວພັນ ກ່ຽວກັບ ການລັກລອບເຄື່ອນຍ້າຍໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ;

8. ປະຕິບັດຂໍ້ຫ້າມຂອງພະນັກງານ ຫຼື ສະມາຊິກພັກ;

9. ຫ້າມມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 14 ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ**

ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ແຕ່ລະຂັ້ນ ນຳໃຊ້ເຄື່ອງແບບ ແລະ ເຄື່ອງໝາຍຂອງເຈົ້າໜ້າທີ່ປ່າໄມ້.

ອົງການສືບສວນ-ສອບສວນຂັ້ນສູນກາງ ແລະ ຂັ້ນແຂວງ ໃຫ້ນຳໃຊ້ຕາປະທັບ ຂອງກົມກວດກາປ່າໄມ້ ແລະ ກອງກວດກາປ່າໄມ້ຂັ້ນແຂວງ. ສຳລັບ ອົງການສືບສວນ-ສອບສວນຂັ້ນເມືອງ ແມ່ນໃຫ້ນຳໃຊ້ຕາປະທັບຂອງ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 15 ການຈັດຕັ້ງປະຕິບັດ**

ອົງການສືບສວນ-ສອບສວນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ມີຄວາມຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ຫ້ອງການກະຊວງ, ບັນດາກົມ, ສະຖາບັນ, ສູນ ແລະ ກອງທຶນອ້ອມຂ້າງກະຊວງ ກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ພາກສ່ວນທີ່ ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ປອ. ເພັດ ພົມພິພັກ